**UNITED NATIONS** **NATIONS UNIES**

**ອົງກາ□ສະຫະປະຊາຊາດ**

**PRESS RELEASE**

# ອົງການສະຫະປະຊາຊາດສືບຕໍ່ໃຫ້ການສະໜັບສະໜູນແກ່ສປປລາວໃນການບັນລຸເປົ້າໝາຍສະຫະສະວັດເພື່ອການພັດທະນາ

ທີ່ນະຄອນຫລວງວຽງຈັນ, ວັນທີ6ກັນຍາ,2013 ໜ່ວຍງານອົງການສະຫະປະຊາຊາດຫລືສປຊໄດ້ຍຶດໝັ້ນສັນຍາຕໍ່ລັດຖະບານລາວໃນດ້ານການຊ່ວຍເຫລືອແລະສະໜັບສະໜູນວຽກງານຫລຸດຜ່ອນຄວາມທຸກຍາກໃນປະເທດ.ການແກ້ໄຂບັນຫານີ້ຍັງຕ້ອງການຄວາມຮ່ວມມືຈາກສາກົນເພື່ອທີ່ຈະເຮັດໃຫ້ສປປລາວບັນລຸເປົ້າໝາຍສະຫັດສະວັດເພື່ອການພັດທະນາ.

ທ່ານ ເລັກ ບຸນວັດ,ຕາງໜ້າຜູ້ປະຈຳການອົງການສປຊປະຈຳລາວໄດ້ກ່າວໃນງານເປີດໂຕບົດລາຍງານທີ່ໂຮງແຮມດອນຈັນໃນວັນທີ6ກັນຍາ,2013ວ່າ“ການຮ່ວມມືວຽກງານສະໜັບສະໜູນຈາກລັດຖະບານແລະບັນດາປະຊາຄົມສາກົນແມ່ນຖືວ່າເປັນປັດໃຈສຳຄັນໃນການບັນລຸເປົ້າໝາຍດ້ານການພັດທະນາຂອງສປປລາວ.”

ບົດລາຍງານຄວາມກ້າວໜ້າຄັ້ງທີ3ນີ້ແມ່ນສ້າງຂຶ້ນມາພາຍໃຕ້ການຮ່ວມມືແລະປະສານງານຂອງລັດຖະບານປະຈຳສປປລາວແລະບັນດາອົງກອນຂອງສປຊ.ບົດລາຍງານນີ້ໄດ້ສະແດງໃຫ້ເຫັນວ່ານັບຕັ້ງແຕ່ປີ2000ທີ່ໄດ້ມີການຖະແຫລງການຮັບເອົາແຜນການເປົ້າໝາຍສະຫັດສະວັດເພື່ອການພັດທະນາເປັນຕົ້ນມາ,ສປປລາວໄດ້ມີຄວາມກ້າວໜ້າຕໍ່ການປັບປຸງຄຸນະພາບຊີວິດຂອງຄົນລວມທັງພື້ນຖານການເປັນຢູ່ດຳລົງຊີວິດຂອງບັນດາຊຸມຊົນທີ່ທຸກຍາກໃນປະເທດ.

ສິ່ງເຫລົ່ານີ້ໄດ້ສະແດງອອກຜ່ານທາງການຂະຫຍາຍຕົວຂອງການບໍລິການຂັ້ນພື້ນຖານດ້ານຕ່າງໆ, ການຮັດແໜ້ນໂຄງຮ່າງພື້ນຖານໃນເຂດຊົນນະບົດແລະການຫລຸດຜ່ອນຄວາມທຸກຍາກ.ເຖິງຢ່າງໃດກໍ່ຕາມບັນຫາການຂາດສານອາຫານ,ການເສຍຊີວິດຂອງແມ່ແລະເດັກ,ການປະລະໂຮງຮຽນແລະການເກັບກູ້ລະເບີດທີ່ຕົກຄ້າງແມ່ນຍັງຖືວ່າມີອັດຕາທີ່ສູງຢູ່ ອີກທັງຍັງເປັນອຸປະສັກໃນການບັນລຸເປົ້າໝາຍສະຫັດສະວັດເພື່ອການພັດທະນາຂອງສປປລາວ.

“ເປົ້າໝາຍເຫລົ່ານີ້ໄດ້ສະທ້ອນເຖິງການຮ່ວມມືແລະເອົາໃຈໃສ່ຂອງບັນດາອົງການຮ່ວມມືສາກົນໃນການປະກອບສ່ວນເພື່ອຫລຸດຜ່ອນຄວາມທຸກຍາກ”ທ່ານເລັກ ບຸນວັດກ່າວ.ທ່ານຍັງໄດ້ກ່າວຕື່ມອີກວ່າ”ຮູບແບບການປ່ຽນແປງແນວໃໝ່ນີ້ໄດ້ຊຸກຍູ້ໃຫ້ມີການສ້າງຄວາມຄິດສ້າງສັນແລະນະວັດຕະກຳໃໝ່ໆທີ່ຖືວ່າເປັນສິ່ງທີ່ຈຳເປັນໃນການພັດທະນາການຮ່ວມມືແລະຍັງຖືວ່າເປັນແນວທາງແກ້ໄຂບັນຫາເພື່ອທີ່ຈະເອົາມາຕໍ່ສູ້ກັບຄວາມທ້າທາຍໃນຕໍ່ໜ້າ.”


**Office of the UN Resident Coordinator**
Address: Lane Xang Avenue, P.O. Box 345, Vientiane, Lao PDR
Telephone: (856-21) 267777 Fax: (856-21) 267799
email: oneun-info.la@one.un.org, website: www.unlao.org

ການຄໍ້າປະກັນຄວາມປອດໄພທາງດ້ານສະບຽງອາຫານແລະໂພສະນາການແມ່ນຖືວ່າເປັນບັນຫາທີ່ທ້າທາຍຕໍ່ການພັດທະນາໃນສປປລາວ,ໃນບົດລາຍງານຍັງໄດ້ເນັ້ນຫນັກກ່ຽວກັບຄວາມບໍ່ເທົ່າທຽມທີ່ຍັງສາມາດພົບເຫັນໄດ້ໃນປະເທດ.”ການເນັ້ນຫນັກກ່ຽວກັບຄວາມຕ້ອງການຂອງກຸ່ມຄົນທີ່ທຸກຍາກແລະຂາດເຂີນໃນປະເທດແມ່ນສຳຄັນຫລາຍໃນການຮັບປະກັນດ້ານການພັດທະນາແລະຄວາມກ້າວຫນ້າແບບຍືນຍົງ” ທ່ານເລັກ ກ່າວ ເພີ່ມເຕີມ

ຍັງເຫລືອອີກພຽງແຕ່1000ມື້ເທົ່ານັ້ນສຳຫລັບສປປລາວແລະບັນດາປະເທດທົ່ວໂລກທີ່ຈະສາມາດບັນລຸເປົ້າຫມາຍສະຫັດສະວັດເພື່ອການພັດທະນາ.ໃນບົດລາຍງານນີ້ໄດ້ສະແດງໃຫ້ເຫັນເຖິງຄວາມສຳຄັນທີ່ລັດຖະບານປະຈຳສປປລາວແລະບັນດາຄູ່ຮ່ວມມືດ້ານການພັດທະນາທີ່ຈຳເປັນຕ້ອງໄດ້ເນັ້ນຫນັກເຖິງບັນດາຂົງເຂດທີ່ຕ້ອງການການເອົາໃຈໃສ່ແລະການຕັດສິນໃຈໃນການຮີບເລັ່ງຂັ້ນຕອນເພື່ອທີ່ຈະສາມາດບັນລຸເປົ້າຫມາຍໃຫ້ໄດ້ພາຍໃນປີ2015.

ທ່ານເລັກ ບຸນວັດ ໄດ້ກ່າວຕາງຫນ້າອົງການສປຊປະຈຳລາວວ່າ”ອົງການສປຊໄດ້ມີຄວາມກຽມພ້ອມທີ່ຈະຮ່ວມມືກັບລັດຖະບານແລະບັນດາຄູ່ຮ່ວມງານອື່ນໆເພື່ອທີ່ຈະຊ່ວຍໃຫ້ສປປລາວບັນລຸການພັດທະນາແບບມີປະສິດທິຜົນແລະຍືນຍົງບໍ່ວ່າຈະເປັນທາງດ້ານການພັດທະນາເປົ້າຫມາຍສະຫັດສະວັດແລະໃນອີກຕໍ່ຫນ້າ”

ເພື່ອເປັນການເນັ້ນຫນັກຄວາມສຳຄັນຂອງງານຄັ້ງນີ້,ອົງການສປຊພ້ອມດ້ວຍກະຊວງການຕ່າງປະເທດຍັງໄດ້ເປີດໂຕງານແຂ່ງຂັນການປະກວດຮູບຖ່າຍໃນຫົວຂໍ້”ສປປລາວຕໍ່ເປົ້າຫມາຍສະຫັດສະວັດເພື່ອການພັດທະນາ.”ງານປະກວດຄັ້ງນີ້ແມ່ນຖືກປະກາດຂຶ້ນຢ່າງເປັນທາງການໃນມື້ເປີດຕົວບົດລາຍງານ.ຈຸດປະສົງຫລັກຂອງການປະກວດແມ່ນເພື່ອປູກຈິດສຳນຶກຂອງຄົນລາວໂດຍສະເພາະແມ່ນໄວຫນຸ່ມກ່ຽວກັບການພັດທະນາໃນສປປລາວ.ການປະກາດຮັບສະຫມັກແມ່ນເລີ່ມແຕ່ມື້ນີ້ຈົນເຖິງທີ13ຕຸລາ 2013.

ບົດລາຍງານນີ້ໃນຮູບແບບພາສາອັງກິດສາມາດດາວໂຫລດໄດ້ທີ່: www.bit.ly/MDGLaos2013

ສຳຫລັບຂໍ້ມູນເພີ່ມເຕີມກ່ຽວກັບການປະກວດຮູບຖ່າຍແມ່ນສາມາດເບິ່ງໄດ້ທີ່: www.bit.ly/laosinfocus ຫລື www.facebook.com/laosinfocus

*ເປົ້າຫມາຍສະຫັດສະວັດເພື່ອການພັດທະນາແມ່ນບັນດາ8ເປົ້າຫມາຍແຫ່ງການພັດທະນາສາກົນທີ່ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການໂດຍຜ່ານການການຖະແຫລງການສະຫັດສະວັດໃນກອງປະຊຸມສະຫັດສະວັດຂອງອົງການສະຫະປະຊາຊາດໃນປີ2000.ໃນນັ້ນບັນດາ189ລັດພາຄີຂອງອົງການສປຊແລະບັນດາ23ອົງການຈັດຕັ້ງສາກົນໄດ້ເຫັນດີຕົກລົງເພື່ອທີ່ຈະບັນລຸເປົ້າຫມາຍນີ້ໃຫ້ໄດ້ໃນປີ2015.ສປປລາວຍັງໄດ້ຮັບຮອງເອົາເປົ້າຫມາຍສະຫັດສະວັດທີ9ເຊິ່ງສ້າງຂຶ້ນສະເພາະໃນສປປລາວນັ້ນກໍ່ຄືການຫລຸດຜ່ອນຜົນກະທົບຈາກບັນຫາລະເບີດທີ່ຍັງບໍ່ທັນແຕກ.*

**Office of the UN Resident Coordinator**
Address: Lane Xang Avenue, P.O. Box 345, Vientiane, Lao PDR
Telephone: (856-21) 267777 Fax: (856-21) 267799
email: oneun-info.la@one.un.org, website: www.unlao.org

**UNITED NATIONS** **NATIONS UNIES**

**ອົງກາ□ສະຫະປະຊາຊາດ**

ສອບຖາມເພີ່ມເຕີມໄດ້ທີ່:

ທ່ານ ເກລັນ ດອດ, ຫົວຫນ້າຫ້ອງການຜູ້ຕາງຫນ້າອົງການ ສປຊ ປະຈຳລາວ

ໂທ 021 267 748, glenn.dodge@one.un.org

**Office of the UN Resident Coordinator**
Address: Lane Xang Avenue, P.O. Box 345, Vientiane, Lao PDR
Telephone: (856-21) 267777 Fax: (856-21) 267799
email: oneun-info.la@one.un.org, website: www.unlao.org